ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ກົມນະໂຍບາຍເງິນຕາ

ເລກທີ 662 /ກນງ

ນະຄອນຫຼວງວຽງຈັນ, ວັນທີ 21 JUL 2015

ສຳນັກງານ ຄຄຊ
ເລກທີ 147
ວັນທີ
ໂທລະສັບ

## ບົດແນະນຳ

## ການຄິດໄລ່ສ່ວນຕ່າງລະຫວ່າງອັດຕາດອກເບ້ຍເງິນຝາກ-ເງິນກູ້ຂອງທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມຂໍ້ຕົກລົງກ່ຽວກັບການກຳນົດອັດຕາດອກເບ້ຍຂອງທະນາຄານທຸລະກິດ ສະບັບເລກທີ 529/ທຫລ, ລົງວັນທີ 21 ກໍລະກົດ 2015.

**ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ແນະນຳ:**

1. ການຄິດໄລ່ອັດຕາດອກເບ້ຍເງິນຝາກສະເລ່ຍຖ່ວງນ້ຳໜັກ.

ສູດຄິດໄລ່:

$$i^d = \sum i_i^d \times \left(\frac{D_i}{A}\right)$$

ໃນນີ້,

$i^d$ = ອັດຕາດອກເບ້ຍເງິນຝາກສະເລ່ຍຖ່ວງນ້ຳໜັກແຕ່ລະສະກຸນເງິນ;

$i_i^d$ = ອັດຕາດອກເບ້ຍເງິນຝາກແຕ່ລະປະເພດແຕ່ລະໄລຍະແຕ່ລະສະກຸນເງິນ ປະກອບມີ ອັດຕາດອກເບ້ຍເງິນຝາກກະແສລາຍວັນ, ເງິນຝາກປະຫຍັດ, ເງິນຝາກມີກຳນົດ 3 ເດືອນ, 6 ເດືອນ, 12 ເດືອນ, 24 ເດືອນ ແລະ ອື່ນໆ;

$D_i$ = ເງິນຝາກແຕ່ລະປະເພດແຕ່ລະໄລຍະແຕ່ລະສະກຸນເງິນ ປະກອບມີ ເງິນຝາກກະແສລາຍວັນ, ເງິນຝາກປະຫຍັດ, ເງິນຝາກມີກຳນົດ 3 ເດືອນ, 6 ເດືອນ, 12 ເດືອນ, 24 ເດືອນ ແລະ ອື່ນໆ;

$A$ = ເງິນຝາກທັງໝົດແຕ່ລະສະກຸນເງິນ;

$\sum$ = ຜົນບວກ.



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

**ຕົວຢ່າງ:** ການຄິດໄລ່ອັດຕາດອກເບ້ຍເງິນຝາກສະເລ່ຍຖ່ວງນໍ້າໜັກແຕ່ລະສະກຸນເງິນ

- <u>ອັດຕາດອກເບ້ຍເງິນຝາກສະເລ່ຍຖ່ວງນໍ້າໜັກສະກຸນເງິນກີບ</u>

| ປະເພດເງິນຝາກ | ຈຳນວນເງິນຝາກ ($D_i$) ຫົວໜ່ວຍ: ຕື້ກີບ | ອັດຕາສ່ວນເງິນຝາກແຕ່ລະປະເພດຕໍ່ເງິນຝາກທັງໝົດ $w_i = D_i \div A$ | ອັດຕາດອກເບ້ຍເງິນຝາກແຕ່ລະປະເພດ ($i_i^d$) | ອັດຕາດອກເບ້ຍເງິນຝາກສະເລ່ຍຖ່ວງນໍ້າໜັກ $i^d = i_i^d \times w_i$ |
|---|---|---|---|---|
| ເງິນຝາກກະແສລາຍວັນ | 3,070.91 | 13.13% | 0% | 0.00% |
| ເງິນຝາກປະຢັດ | 5,055.43 | 21.61% | 1.96% | 0.42% |
| ເງິນຝາກມີກຳນົດ | 15,269.12 | - | - | - |
| 3 ເດືອນ | 662.53 | 2.83% | 3.34% | 0.09% |
| 6 ເດືອນ | 1,077.00 | 4.60% | 4.22% | 0.19% |
| 12 ເດືອນ | 4,369.82 | 18.68% | 6.13% | 1.14% |
| 24 ເດືອນ | 9,159.77 | 39.15% | 8.63% | 3.37% |
| ລວມທັງໝົດ | **(A) = 23,395.46** | 100.00% | | **($i^d$)= 5.23%** |

- <u>ອັດຕາດອກເບ້ຍເງິນຝາກສະເລ່ຍຖ່ວງນໍ້າໜັກສະກຸນເງິນບາດ</u>

| ປະເພດເງິນຝາກ | ຈຳນວນເງິນຝາກ ($D_i$) ຫົວໜ່ວຍ: ຕື້ກີບ | ອັດຕາສ່ວນເງິນຝາກແຕ່ລະປະເພດຕໍ່ເງິນຝາກທັງໝົດ $w_i = D_i \div A$ | ອັດຕາດອກເບ້ຍເງິນຝາກແຕ່ລະປະເພດ ($i_i^d$) | ອັດຕາດອກເບ້ຍເງິນຝາກສະເລ່ຍຖ່ວງນໍ້າໜັກ $i^d = i_i^d \times w_i$ |
|---|---|---|---|---|
| ເງິນຝາກກະແສລາຍວັນ | 2,767.58 | 9.98% | 0.00% | 0.00% |
| ເງິນຝາກປະຢັດ | 14,860.46 | 53.58% | 1.29% | 0.69% |
| ເງິນຝາກມີກຳນົດ | 10,106.72 | - | - | - |
| 3 ເດືອນ | 836.83 | 3.02% | 2.25% | 0.07% |
| 6 ເດືອນ | 1,153.86 | 4.16% | 2.85% | 0.12% |
| 12 ເດືອນ | 4,696.21 | 16.93% | 3.85% | 0.65% |
| 24 ເດືອນ | 3,419.82 | 12.33% | 5.91% | 0.73% |
| ລວມທັງໝົດ | **(A) = 27,734.76** | 100.00% | | **($i^d$)= 2.26%** |

– <u>ອັດຕາດອກເບ້ຍເງິນຝາກສະເລ່ຍຖ່ວງນ້ຳໜັກສະກຸນເງິນໂດລາ</u>

| ປະເພດເງິນຝາກ | ຈຳນວນເງິນຝາກ ($D_i$) ຫົວໜ່ວຍ: ຕື້ກີບ | ອັດຕາສ່ວນເງິນຝາກແຕ່ລະປະເພດຕໍ່ເງິນຝາກທັງໝົດ $w_i = D_i \div A$ | ອັດຕາດອກເບ້ຍເງິນຝາກແຕ່ລະປະເພດ ($i_i^d$) | ອັດຕາດອກເບ້ຍເງິນຝາກສະເລ່ຍຖ່ວງນ້ຳໜັກ $i^d = i_i^d \times w_i$ |
|---|---|---|---|---|
| ເງິນຝາກກະແສລາຍວັນ | 566.64 | 32% | 0% | 0.00% |
| ເງິນຝາກປະຢັດ | 702.93 | 39% | 1.46% | 0.57% |
| ເງິນຝາກມີກຳນົດ | 524.74 | - | - | - |
| 3 ເດືອນ | 66.35 | 4% | 2.61% | 0.10% |
| 6 ເດືອນ | 59.71 | 3% | 3.26% | 0.11% |
| 12 ເດືອນ | 132.6 | 7% | 3.97% | 0.29% |
| 24 ເດືອນ | 266.08 | 15% | 6.29% | 0.93% |
| ລວມທັງໝົດ | (A) = 1,794.31 | 100% | | **($i^d$)= 2.00%** |

2. ການຄິດໄລ່ອັດຕາດອກເບ້ຍເງິນກູ້ສະເລ່ຍຖ່ວງນ້ຳໜັກ.

ສູດຄິດໄລ່:

$$i^L = \sum w_i \times i_i^L$$

ໃນນີ້, $w_i = \left(\frac{L_i}{L}\right)$

$i^L$ = ອັດຕາດອກເບ້ຍເງິນກູ້ສະເລ່ຍຖ່ວງນ້ຳໜັກແຕ່ລະສະກຸນເງິນ;

$w_i$ = ອັດຕາສ່ວນຂອງການປ່ອຍກູ້ສຳລັບລູກຄ້າແຕ່ລະລາຍ ແຕ່ລະປະເພດ ແຕ່ລະໄລຍະຕໍ່ເງິນກູ້ທັງໝົດແຕ່ລະສະກຸນເງິນ ປະກອບມີ ເງິນກູ້ລູກຄ້າແຕ່ລະລາຍປະເພດ A, B, C, D, E ແລະ ອື່ນໆ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ;

$i_i^L$ = ອັດຕາດອກເບ້ຍເງິນກູ້ສຳລັບລູກຄ້າແຕ່ລະລາຍ ແຕ່ລະປະເພດ ແຕ່ລະໄລຍະ ແຕ່ລະສະກຸນເງິນ ປະກອບມີ ອັດຕາດອກເບ້ຍເງິນກູ້ລູກຄ້າແຕ່ລະລາຍປະເພດ A, B, C, D, E ແລະ ອື່ນໆ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ;

$L_i$ = ເງິນກູ້ສຳລັບລູກຄ້າແຕ່ລະລາຍ ແຕ່ລະປະເພດ ແຕ່ລະໄລຍະແຕ່ລະສະກຸນເງິນ ປະກອບມີ ເງິນກູ້ລູກຄ້າແຕ່ລະລາຍປະເພດ A, B, C, D, E ແລະ ອື່ນໆ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ;

$L$ = ເງິນກູ້ທັງໝົດແຕ່ລະສະກຸນເງິນ.

$\sum$ = ຜົນບວກ.

**ຕົວຢ່າງ:** ການຄິດໄລ່ອັດຕາດອກເບ້ຍເງິນກູ້ສະເລ່ຍຖ່ວງນ້ຳໜັກແຕ່ລະສະກຸນເງິນ

- <u>ອັດຕາດອກເບ້ຍເງິນກູ້ສະເລ່ຍຖ່ວງນ້ຳໜັກສະກຸນເງິນກີບ</u>

| ເງິນກູ້ຂອງລູກຄ້າແຕ່ລະລາຍແຕ່ລະປະເພດ | ຈຳນວນເງິນກູ້ ($L_i$) ຫົວໜ່ວຍ: ຕື້ກີບ | ອັດຕາສ່ວນເງິນກູ້ແຕ່ລະປະເພດຕໍ່ເງິນກູ້ທັງໝົດ $W_i = L_i \div L$ | ອັດຕາດອກເບ້ຍເງິນກູ້ແຕ່ລະປະເພດ ($i_i^L$) | ອັດຕາດອກເບ້ຍເງິນກູ້ສະເລ່ຍຖ່ວງນ້ຳໜັກ $i^L = i_i^L \times W_i$ |
|---|---|---|---|---|
| ເງິນກູ້ລູກຄ້າ ກ | 4,715.68 | 22.06% | 12.00% | 2.65% |
| ຂ | 7,159.38 | 33.50% | 9.00% | 3.01% |
| . | | - | - | - |
| . | | - | - | - |
| . | | - | - | - |
| ຣ | 9,498.44 | 44.44% | 8.00% | 3.56% |
| ລວມທັງໝົດ | **($L$) = 21,373.50** | 100.00% | | **($i^L$)= 9.22%** |

- <u>ອັດຕາດອກເບ້ຍເງິນກູ້ສະເລ່ຍຖ່ວງນ້ຳໜັກສະກຸນເງິນບາດ</u>

| ເງິນກູ້ຂອງລູກຄ້າແຕ່ລະລາຍແຕ່ລະປະເພດ | ຈຳນວນເງິນກູ້ ($L_i$) ຫົວໜ່ວຍ: ຕື້ກີບ | ອັດຕາສ່ວນເງິນກູ້ແຕ່ລະປະເພດຕໍ່ເງິນກູ້ທັງໝົດ $W_i = L_i \div L$ | ອັດຕາດອກເບ້ຍເງິນກູ້ແຕ່ລະປະເພດ ($i_i^L$) | ອັດຕາດອກເບ້ຍເງິນກູ້ສະເລ່ຍຖ່ວງນ້ຳໜັກ $i^L = i_i^L \times W_i$ |
|---|---|---|---|---|
| ເງິນກູ້ລູກຄ້າ ກ | 11,045.00 | 53.35% | 5.00% | 2.67% |
| ຂ | 4,159.38 | 20.09% | 9.00% | 1.81% |
| . | - | - | - | - |
| . | - | - | - | - |
| . | - | - | - | - |
| ຣ | 5,498.44 | 26.56% | 6.50% | 1.73% |
| ລວມທັງໝົດ | **($L$) = 20,702.82** | 100.00% | | **($i^L$)= 6.20%** |

- ອັດຕາດອກເບ້ຍເງິນກູ້ສະເລ່ຍຖ່ວງນ້ຳໜັກສະກຸນເງິນໂດລາ

| ເງິນກູ້ຂອງລູກຄ້າແຕ່ລະລາຍແຕ່ລະປະເພດ | ຈຳນວນເງິນກູ້ ($L_i$) ຫົວໜ່ວຍ: ຕື້ກີບ | ອັດຕາສ່ວນເງິນກູ້ແຕ່ລະປະເພດຕໍ່ເງິນກູ້ທັງໝົດ $W_i = L_i \div L$ | ອັດຕາດອກເບ້ຍເງິນກູ້ແຕ່ລະປະເພດ ($i_i^L$) | ອັດຕາດອກເບ້ຍເງິນກູ້ສະເລ່ຍຖ່ວງນ້ຳໜັກ $i^L = i_i^L \times W_i$ |
|---|---|---|---|---|
| ເງິນກູ້ລູກຄ້າ ກ | 855.00 | 60.08% | 5.00% | 3.00% |
| ຂ | 238.00 | 16.73% | 9.00% | 1.51% |
| . | - | - | - | - |
| . | - | - | - | - |
| . | - | - | - | - |
| ຣ | 330.00 | 23.19% | 6.30% | 1.46% |
| ລວມທັງໝົດ | **($L$) = 1,423.00** | 100.00% | | **($i^L$)= 5.97%** |

3. ການຄິດໄລ່ສ່ວນຕ່າງລະຫວ່າງອັດຕາດອກເບ້ຍເງິນຝາກ-ເງິນກູ້ສະເລ່ຍຖ່ວງນ້ຳໜັກ.

ສູດຄິດໄລ່:

$$NI = (i^L) - (i^d)$$

ໃນນັ້ນ,

$NI$ = ສ່ວນຕ່າງລະຫວ່າງອັດຕາດອກເບ້ຍເງິນຝາກ-ເງິນກູ້ສະເລ່ຍຖ່ວງນ້ຳໜັກ ແຕ່ລະສະກຸນເງິນ;

$(i^d)$ = ອັດຕາດອກເບ້ຍເງິນຝາກສະເລ່ຍຖ່ວງນ້ຳໜັກ ແຕ່ລະສະກຸນເງິນ;

$(i^L)$ = ອັດຕາດອກເບ້ຍເງິນກູ້ສະເລ່ຍຖ່ວງນ້ຳໜັກ ແຕ່ລະສະກຸນເງິນ.

**ຕົວຢ່າງ:** ການຄິດໄລ່ສ່ວນຕ່າງລະຫວ່າງອັດຕາດອກເບ້ຍເງິນຝາກ-ເງິນກູ້ສະເລ່ຍຖ່ວງນ້ຳໜັກ

| ສະກຸນເງິນ | ອັດຕາດອກເບ້ຍເງິນກູ້ສະເລ່ຍຖ່ວງນ້ຳໜັກ ຈາກຂໍ້ 2. ($i^L$) | ອັດຕາດອກເບ້ຍເງິນຝາກສະເລ່ຍຖ່ວງນ້ຳໜັກ ຈາກຂໍ້ 1. ($i^d$) | ສ່ວນຕ່າງລະຫວ່າງອັດຕາດອກເບ້ຍເງິນຝາກ-ເງິນກູ້ NI = ($i^L$)- ($i^d$) |
|---|---|---|---|
| ກີບ | 9.22% | 5.23% | 3.99% |
| ບາດ | 6.20% | 2.26% | 3,94% |
| ໂດລາ | 5.97% | 2.00% | 3,97% |

4. ໃຫ້ທະນາຄານທຸລະກິດຈັດຕັ້ງປະຕິບັດການຄິດໄລ່ສ່ວນຕ່າງລະຫວ່າງອັດຕາດອກເບ້ຍເງິນຝາກ-ເງິນກູ້ສະເລ່ຍຖ່ວງນ້ຳໜັກ ແຕ່ລະສະກຸນເງິນຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3 ຂອງບົດແນະນຳສະບັບນີ້ ແລະ ລາຍງານໃຫ້ກົມ

ຄຸ້ມຄອງທະນາຄານທຸລະກິດ, ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ເປັນລາຍເດືອນ ພາຍໃນ 5 ວັນລັດຖະການຂອງເດືອນຖັດໄປ.

5. ບົດແນະນຳສະບັບນີ້ມີຜົນສັກສິດນັບ ແຕ່ວັນທີ 3 ສິງຫາ 2015 ເປັນຕົ້ນໄປ.

ຫົວໜ້າກົມນະໂຍບາຍເງິນຕາ

ຄຳພຸດ ສິດທິລາດ